ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມ ຄະນະຮັບຜິດຊອບຄົ້ນຄວ້າສ້າງກະດານຊື້-ຂາຍຮຸ້ນຂອງວິສາຫະກິດຂະໜາດນ້ອຍ - ກາງ ໃນຕະຫຼາດຫຼັກຊັບລາວ



ໃນວັນທີ 04 ກັນຍາ 2023 ນີ້, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມ ຄະນະຮັບຜິດຊອບຄົ້ນຄວ້າສ້າງກະດານຊື້-ຂາຍຮຸ້ນຂອງວິສາຫະກິດຂະໜາດນ້ອຍ - ກາງໃນຕະຫຼາດຫຼັກຊັບລາວ ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນ. ຂັນແກ້ວ ຫຼ້າມະນີເງີນ ຮອງຜູ້ວ່າການ ທຫລ, ຫົວໜ້າຄະນະຮັບຜິດຊອບ, ໃຫ້ກຽດເຂົ້າຮ່ວມໂດຍທ່ານ ປອ. ມະໂນທອງ ວົງໄຊ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ, ມີບັນດາຄະນະກົມ, ຄະນະພະແນກ ແລະ ວິຊາການ ທັງສອງພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ.





ຈຸດປະສົງໃນການຈັດກອງປະຊຸມໃນຄັ້ງນີ້, ເພື່ອອີງຕາມແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ IX (2021-2025) ຂອງ ສປປ ລາວ ທີ່ມີຄວາມຕ້ອງການແຫຼ່ງທຶນເພື່ອພັດທະນາໃນຈຳນວນຫຼາຍສົມຄວນ ສະນັ້ນ, ການພັດທະນາກະດານຊື້-ຂາຍຮຸ້ນ ຂອງວິສາຫະກິດຂະໜາດນ້ອຍ - ກາງ ໃນຕະຫຼາດຫຼັກຊັບລາວ ຫຼື ກະດານ SMEB ເພື່ອຮອງຮັບບັນດາ SME ແລະ SOE ທີ່ລວມມີບໍລິສັດທີ່ບໍ່ມີເງື່ອນໄຂຈົດທະບຽນໃນກະດານຫຼັກ, ບໍລິສັດທີ່ມີເງື່ອນໄຂແຕ່ຍັງບໍ່ຈົດທະບຽນໃນກະດານຫຼັກ ແລະ ບໍລິສັດທີ່ຖອນການຈົດທະບຽນຈາກກະດານຫຼັກ ຊຶ່ງກະດານດັ່ງກ່າວ ຈະຊ່ວຍເພີ່ມຜະລິດຕະພັນໃໝ່ໃນຕະຫຼາດຫຼັກຊັບ ໃຫ້ຫຼາກຫຼາຍ ແລະ ຈະເຮັດໃຫ້ ສາມາດບັນລຸຄາດໝາຍລວມ ໃນການສ້າງເງື່ອນໄຂໃຫ້ວິສາຫະກິດ ທີ່ມີຄວາມພ້ອມ, ມີຜົນການ ດຳເນີນງານທີ່ດີ ແລະ ມີທ່າແຮງ ຈາກທຸກຂະແໜງການ ໃຫ້

ສາມາດລະດົມທຶນ ຜ່ານຕະຫຼາດທຶນ ຄື: ສ້າງຊ່ອງທາງການລະດົມທຶນໃຫ້ແກ່ SME ທີ່ຕ້ອງການລະດົມທຶນ ເພື່ອຂະຫຍາຍ ທຸລະກິດ; ເພີ່ມຜະລິດຕະພັນ ແລະ ເສີມຂະຫຍາຍບົດບາດຂອງ ຕະຫຼາດທຶນ ຕໍ່ການເຂົ້າເຖິງ ແຫຼ່ງທຶນຂອງ SME ກໍ່ຄືການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ; ເພີ່ມທາງເລືອກໃໝ່ໃຫ້ແກ່ວິສາຫະກິດຢູ່ ສປປ ລາວ ທີ່ຂາດເງື່ອນໄຂການຈົດທະບຽນ ໃນກະດານຫຼັກ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນ ຕລຊລ ໂດຍສະເພາະ ລັດວິສາຫະກິດ (SOE); ສ້າງກົນໄກເພື່ອພັດທະນາຫົວໜ່ວຍວິສາຫະກິດ ໃຫ້ມີຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ ໂດຍນໍາໃຊ້ກົນໄກຕະຫຼາດທຶນ ເປັນຕົ້ນ ການຄຸ້ມຄອງບໍລິຫານ (Corporate governance), ມາດຕະຖານບັນຊີ IFRS ແລະ ການເປີດເຜີຍຂໍ້ມູນ ແລະ ກ້າວໄປສູ່ການຈົດທະບຽນຈາກກະດານຊື້-ຂາຍຮຸ້ນ ຂອງວິສາຫະກິດຂະໜາດນ້ອຍ - ກາງ ໄປສູ່ກະດານຫຼັກໃນຕໍ່ໜ້າ; ຮອງຮັບການຈົດທະບຽນ ຊື້-ຂາຍຮຸ້ນຂອງບໍລິສັດທີ່ຖອນຈົດທະບຽນຈາກກະດານຫຼັກ;ເພີ່ມທາງເລືອກໃໝ່ໃຫ້ແກ່ຜູ້ລົງທຶນໃນ ຕະຫຼາດຫຼັກຊັບລາວ (ຕລຊລ).

ກອງປະຊຸມດັ່ງກ່າວແມ່ນໄດ້ດໍາເນີນເປັນເວລາເຄິ່ງວັນ ເຖິງວ່າເປັນເວລາສັ້ນ ແຕ່ກໍ່ເຕັມໄປດ້ວຍເນື້ອໃນອັນເລິກເຊິ່ງ. ພ້ອມນີ້, ບັນດາພາກສ່ວນທີ່ກ່ຽວຂ້ອງ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງ ໃນການປະກອບຄໍາຄິດຄໍາເຫັນ ຈຶ່ງເຮັດໃຫ້ກອງປະຊຸມດໍາເນີນໄປດ້ວຍຜົນສໍາເລັດຢ່າງຈົບງາມຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກໍານົດໄວ້ ໂດຍສະເພາະ ແມ່ນໄດ້ຮ່ວມກັນປະກອບຄໍາເຫັນຕໍ່ແບບແຜນການຈັດຕັ້ງປະຕິບັດໃນອະນາຄົດ ເພື່ອຊຸກຍູ້ໃຫ້ມີ ວິສາຫະກິດຂະໜາດນ້ອຍ - ກາງ ເຂົ້າຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.

**ຂ່າວ-ພາບ: ສົມພິດ ທໍາມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*